**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ສປປລາວ

ເລກທີ 724/ຫຄຊກລ.ຄພ

ນະຄອນຫລວງວຽງຈັນ, ວັນທີ 30 ສິງຫາ 2023

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ

**ເລື່ອງ:** ຜົນການຕິດຕາມ ກວດກາ ແລະ ຄວບຄຸມຄຸນນະພາບ ຂອງອົງການເກັບກູ້ລະເບີດ MAG ປະຈຳແຂວງ ຄຳມ່ວນ.

## I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການ ຄຊກລ ສະບັບເລກທີ 603/ຫຄຊກລ, ວັນທີ 28 ກໍລະກົດ 2023 ວ່າດ້ວຍການແຕ່ງຕັ້ງພະນັກງານໄປເຮັດວຽກລັດຖະການຢູ່ຕ່າງແຂວງ. ລົງຢ້ຽມຢາມ ຕິດຕາມການປະຕິບັດງານ ອົງການເກັບກູ້ລະເບີດ MAG ປະຈຳແຂວງ ຄຳມ່ວນ ທີ່ເຄື່ອນໄຫວດຳເນີນງານຕາມບົດບັນທຶກຄວາມເຂົ້າໃຈ, ເຊິ່ງດ້ານວິຊາການແມ່ນປະຕິບັດຕາມມາດຕະຖານການປະຕິບັດງານ (SOP) ທີ່ເມືອງມະຫາໄຊ, ເມືອງຍົມມະລາດ, ເມືອງບົວລະພາ. ໃນການລົງຕິດຕາມ ກວດກາຄັ້ງນີ້ປະກອບມີ ວິຊາການຈາກຫ້ອງການ ຄຊກລ, ຄຄກລຂ ຄຳມ່ວນ ແລະ ວິຊາການອົງການເກັບກູ້ລະເບີດ MAG ແຂວງຄຳມ່ວນ, ລະຫ່ວາງວັນທີ 10 ຫາ 17 ສິງຫາ 2023, ຄະນະທີມງານລາຍຊື່ດັ່ງລຸ່ມນີ້:

1. ທ່ານ ບຸນນານ ລັດຕະນະວົງ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
2. ທ່ານ ນຸພົດ ໄຊຊະນະ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
3. ທ່ານ ໄລທອງ ຈັນທາທິລາດ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
4. ທ່ານ ແພງສີ ດວງພັນໄຊ, ແພດ/ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
5. ທ່ານ ວິໄລສັກ ໄຊປັນຍາ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
6. ທ່ານ ພອນພິລົມ ເຕໄຊ, ຄຄກລ ແຂວງ ຄຳມ່ວນ.

ພາກສ່ວນອົງການເກັບກູ້ລະເບີດ MAG.

1. ທ່ານ ຄຳໄຊ ໄຊຍະວົງ, ວິຊາການຂັ້ນ 4, ຜູ້ບໍລິຫານຝ່າຍປະຕິບັດງານພາກສະໜາມຂອງອົງການເກັບກູ້ລະເບີດ MAG ປະຈຳແຂວງ ຄຳມ່ວນ;
2. ທ່ານ ອຸດົມ ພົມວິຈິດ, ຫົວໜ້າກວດກາຄຸນນະພາບ ແລະ ຝຶກອົບຮົມ.
3. ທ່ານ ໄຊຍະສອນ ສາຍເນດ, ຫົວໜ້າແພດອົງການເກັບກູ້ລະເບີດ MAG ປະຈຳແຂວງ ຄຳມ່ວນ.

### 1. ຈຸດປະສົງໃນການຕິດຕາມກວດກາ

ເພື່ອຕິດຕາມ ກວດກາການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ສັງເກດນັກວິຊາການ ວຽກງານບໍລິຫານຄຸ້ມຄອງບັນຊາ, ດ້ານເຕັກນິກການປະຕິບັດສຳຫຼວດບໍ່ແມ່ນວິຊາການ, ສຳຫຼວດດ້ານວິຊາການ, ກວດກູ້, ທຳລາຍ ລບຕ ແລະ ຄວບຄຸມຄຸນນະພາບ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນປະຈຳປີ ແລະ ຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບ ໃນມາດຕະຖານອັນດຽວກັນ.

### 2. ຈຳນວນພະນັກງານ

ປັດຈຸບັນພະນັກງານປະຈໍາຢູ່ ອົງການແມັກລາວ ປະຈໍາ ແຂວງ ຄໍາມ່ວນ ມີ ຈໍານວນທັງໝົດ: 289 ຄົນ, ຍິງ 117 ຄົນ, ໃນນີ້ມີພະນັກງານປະຈໍາຫ້ອງການ ແມັກ ລາວ ປະຈໍາຢູ່ ແຂວງຄໍາມ່ວນ ມີ ຈໍານວນທັງໝົດ 46 ຄົນ, ຍິງ 13 ຄົນ, ພະນັກງານພາກສະໜາມມີ 243 ຄົນ, ຍິງ 104 ຄົນ, ໃນນີ້ລວມມີ ຊ່ຽວຊານຕ່າງປະເທດ 01 ຄົນ ແລະ ຊ່ຽວຊານຄົນລາວ 01 ຄົນ, ເຊິ່ງປະກອບທີມງານມີຄື: ທີມງານກວດກູ້ມີຢູ່ປັດຈຸບັນລວມມີ 11 ທີມງານ, ທີມງານສໍາຫຼວດທາງດ້ານວິຊາການ 1 ທີມງານ, ທີມງານກວດກາຄຸນນະພາບ 01 ທີມງານ, ທີມງານທໍາລາຍເຄື່ອນທີ່ 1 ທີມງານ, ທີມງານພົວພັນຊຸມຊົນ 4 ທີມງານ, ທີມງານຕັດຫຍ້າດ້ວຍມື 11 ທີມງານ, ທີມງານຕັດຫຍ້າດ້ວຍກົນຈັກ 1 ທີມງານ.

## II. ເຄື່ອນໄຫວປະຕິບັດງານເກັບກູ້ ລບຕ

ອົງການເກັບກູ້ລະເບີດ MAG ປະຈໍາແຂວງຄໍາມ່ວນ ມີ 03 ທີມ: NMFA: ສໍາຫຼວດ ແລະ ກວດກູ້ລະເບີດ, ສະຖານເອກອັກຄະລະລັດຖະທູດຍີ່ປຸ່ນ (Japan GGP-Lao): ທີມພົວພັນຊຸມຊົນ ແລະ ທໍາລາຍລະເບີດ, FDCO: ສໍາຫຼວດທີ່ບໍ່ແມ່ນທາງດ້ານວິຊາການ, ໂຄສະນາຄວາມສ່ຽງໄພຕໍ່ ລບຕ (EORE), ກວດກູ້ລະເບີດ.

1) ວຽກງານເກັບກູ້ ລບຕ: ກ່ອນທີມງານລົງກວດກູ້ລະເບີດໃນສະໜາມ ຕ້ອງມີຂໍ້ມູນຈາກ NTS ແລະ TS ເຊິ່ງຖານຂໍ້ມູນຂອງອົງການເປັນຜູ້ສະໜອງໃຫ້ຈຶ່ງສາມາດກວດກູ້ໄດ້. ຢ້ຽມຢາມສະໜາມກວດກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ບ້ານ ວັງຄົນ, ເມືອງ ບົວລະພາ ແຂວງ ຄໍາມ່ວນ MAG_AC_T54_2023_1206054 ເນື້ອທີ່ພັດທະນາ ເລີ່ມວັນທີ 10 ມິຖຸນາ 2023, ຄາດຄະເນຈະສໍາເລັດ ວັນທີ 31 ພາຈິກ 2023, ທີມງານມີຈໍານວນຄົນ 12 ຄົນ, ວິຊາການເກັບກູ້ 08 ຄົນ, ຫົວໜ້າທີມງານ 01 ຄົນ,ຮອງທີມ 01 ຄົນ, ແພດ 01 ຄົນ,ສະເພີຂັບລົດ 01 ຄົນ, ເຊິ່ງມີເນື້ອທີ່ລວມທັງໝົດ **16,529 m²** ຜູ້ໄດ້ຮັບຜົນປະໂຫຍດ 03 ຄອບຄົວ, ຮອດວັນທີ 14 ສິງຫາ 2023 ກວດກູ້ໄດ້ຈໍານວນ **7,176** ຕາແມັດ, ສິ່ງກີດຂວາງ 4,768 ຕາແມັດ ເນືອທີ່ສືບຕໍ່ກວດກູ້ 4,585 ຕາແມັດ ສະໜາມນີ້ພົບສະເກັດຫຼາຍ ແລະ ກວດພົບລະເບີດບົມບີຊະນິດ **BLU3b** ແລະ **BLU42** ໄດ້ທໍາລາຍແລ້ວ, ການປະຕິບັດກວດກູ້ໄດ້ສະເລ່ຍຈໍານວນເນື້ອທີ່ 80 ຕາແມັດ ຕໍ່ມື້/ທີມ, ເຕັກນິກການກວດກູ້ແມ່ນນໍາໃຊ້ 01 ຄົນ ທັງກວດທັງຈົ້ມ. ນອກນີ້ມີການສະໜັບໜູນດ້ານການບໍລິຫານດັ່ງນີ້: ການສະໜັບສະໜູນດ້ານການແພດ, ການບັນຊາສະໜາມ, ລະບົບການສື່ສານການ, ປັກໝາຍສະໜາມເກັບກູ້, ເອກະສານປະຈໍາສະໜາມ, ພະຫະນະນໍາສົ່ງຄົນເຈັບ ແລະ ອຸປະກອນການແພດ. ການເກັບກູ້ລະເບີດໄດ້ປະຕິບັດຕາມລະບຽບ ແລະ ຂັ້ນຕອນການກວດກູ້ (ໄດ້ມີການທົດສອບເຄື່ອງກວດກັບລະເບີດເປົ້າໝາຍໃນຄວາມເລິກ 25 ຊັງຕີແມັດ), ການໝາຍ ລບຕ ທີ່ກວດພົບ, ສະໜາມນີ້ນໍາໃຊ້ເຄື່ອງກວດຫຍີ່ຫໍ້ PIDD1 ແລະ PIDD2, Large Loop. 740 M3, Mine LapF3L. (ບົດລາຍງານຄັດຕິດ, ເດືອນ ກໍລະກົດ 2023)

2) ການທໍາລາຍ ລບຕ: ຢ້ຽມຍາມທີມງານທໍາລາຍລະເບີດເຄື່ອນທີ່ເລກທີ 159 ທີ່ບ້ານ ແສນພັນ ເມືອງບົວລະພາ ແຂວງຄໍາມ່ວນ ປະເພດລະເບີດ BLU 26, ຈໍານວນ 01 ໜ່ວຍທີ່ປະຊາຊົນລາຍງານ, ທີມງານໄດ້ປະຕິບັດຕົວຈິງ ໃຫ້ຄະນະກວດກາຄຸນນະພາບຕິດຕາມ ເຊິ່ງການສັງເກດ ຕີລາຄາເຫັນວ່າ ການວາງແຜນ, ການລາຍງານຫາຫ້ອງການກ່ອນການທໍາລາຍ, ການວາງຈຸດຍາມ, ຈຸດຍິງ, ໄລຍະຄວາມປອດໄພ, ການທົດລອງອື່ນໆ ແລະ ວິທີການຕໍ່ແກັບເຂົ້າວົງຈອນ ຖືວ່າເຮັດໄດ້ຖືກຕ້ອງຕາມມາດຕະຖານການປະຕິບັດງານທີ່ໄດ້ກໍານົດໄວ້.

3) ຄວບຄຸມຄຸນນະພາບ: ທີມງານກວດກາຄຸນນະພາບຂອງຫ້ອງການ ຄຊກລ ລົງກວດກາ ຄວບຄຸມຄຸນນະພາບ 2% ສະໜາມກວດກູ້ສໍາເລັດແລ້ວຂອງອົງການເກັບກູ້ລະເບີດແມັກລາວປະຈໍາແຂວງຄໍາມ່ວນ ໃນເນື້ອທີ່ກວດກູ້ແລ້ວ ID: ຫຼັງຄັງ MAG-AC-2022-1206049-327 S = 25,161 m², QC (15x15,15x15), S=450 m², ຫຼັງຄັງ MAG-AC-2023-1206049-011 S= 50,040 m², QC (30x25, 20x25), ຫຼັງຄັງ MAG_AC_2022_12060 49_338 S= 9,350 m², ຫຍ້າຫວາຍ MAG-AC-2023-1206041-008 S= 31248 m², QC (15x50), MAG_AC_ 2022_12060 49_338, S= 9,350m², ແສນພັນ MAG-AC-2023-1206031-019, S= 3 1786 m², QC (5x40x40x20), ສະອາງ MAG-AC-2023-1206023-030 S= 51594m², QC


ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫ້ອງການ ຄຊກລ, ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ.ຕູ້ໄປສະນີ: 7261, ໂທ: (856--21) 262398, ແຟັກ : 262398,

(25x30, 20x20), ແສນພັນ MAG-AC-2023-1206031-032 S: 96379 m², QC (20x30,20x30, 20x30,20x20), ບ້ານໂພນ MAG-AC-2022-1206045-269 S: 369473 m², QC (20x30, 10x15). ຈຳນວນ 08 ສະໜາມເທົ່າກັບເນື້ອທີ່ກວດກູ້ແລ້ວລວມທັງໝົດຈຳນວນ 306,895 m², ລວມທັງໝົດເນື້ອທີ່ QC ຈຳນວນ 7,550 m² ກວດກາຕົວຈິງເຫັນວ່າ ບໍ່ພົບລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ຊິ້ນສ່ວນຂອງລະເບີດ (ສະເກັດ) ຫຼື ເຫຼັກເສດທີ່ໃຫຍ່ກວ່າເຄິ່ງບົມບີ 26 (BLU 26$^{1/2}$).

## III. ຜົນຂອງການກວດກາ

ຜ່ານການຕິດຕາມ ກວດກາສະໜາມກວດກູ້, ຄວບຄຸມຄຸນນະພາບ ແລະ ທຳລາຍລະເບີດ ທີ່ກຳລັງປະຕິບັດງານຂອງອົງການເກັບກູ້ລະເບີດ MAG ປະຈຳແຂວງ ຄຳມ່ວນ ບັນດາທີມງານປະຕິບັດຕາມມາດຕະຖານການປະຕິບັດງານທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ ສະຫຼຸບໄດ້ດັ່ງນີ້:

1. ຈຸດດີ

- ບັນດາເອກະສານປະຈຳສະໜາມ ປຶ້ມບັນທຶກການທົດສອບເຄື່ອງກວດປະຈຳວັນ, ບັນທຶກໝວດເລືອດ, ອຸປະກອນການແພດ, ອາການແພ້ຕ່າງໆຂອງພະນັກງານ, ບັນທຶກຕິດຕາມ ກວດກາຂອງ SEOD, ປຶ້ມບັນທຶກແຂກເຂົ້າຢ້ຽມຢາມ ແລະ ອື່ນໆ.
- ລະບົບການສື່ສານຮັບໃຊ້ໄດ້ເປັນປົກກະຕິ ລະບົບສັນຍານຄື້ນສັ້ນ, ວິທະຍຸຕິດຕັ້ງກັບລົດ ແລະ ໂທລະສັບມືຖື.
- ຖ້າກວດພົບລະເບີດບົມບີ ທີມງານຈະຕ້ອງໄດ້ທຳລາຍໃນທ້າຍຊົ່ວໂມງເຮັດວຽກຂອງມື້ນັ້ນ ທຸກໆຄັ້ງ.
- ພະຫະນະຮັບໃຊ້ທີມງານພາກສະໜາມພຽງພໍ.
- ກວດກາ ຄວບຄຸມຄຸນນະພາບ ຂອງອົງການເກັບກູ້ລະເບີດ MAG ປະຈຳແຂວງຄຳມ່ວນ ປະຕິບັດດັ່ງນີ້ ຫົວໜ້າທີມງານປະຕິບັດ 10% ໃນລັອກທີ່ສຳເລັດແລ້ວ ເພື່ອໃຫ້ປອດລະເບີດບໍ່ທັນແຕກຕົກຄ້າງ.
- ມີເອກະສານຄວບຄຸມຄຸນນະພາບພາຍໃນ(QC) ຂອງອົງການເກັບກູ້ລະເບີດ MAG ປະຈຳແຂວງ ຄຳມ່ວນ.

2. ຂໍ້ຄົງຄ້າງ

- ແນະນຳສາງອຸປະກອນ ແລະ ການຢາໃຫ້ໃສ່ເພດານປ້ອງກັນຂີ້ຝຸ່ນ.
- ແນະນຳໃຫ້ຈັດອຸປະກອນສະເພາະ ຊຸດລາງບາດປະຈຳກະເປົ໋າແພດ.
- ແນະນຳກ່ອນການທຳລາຍລະເບີດຄວນກວດສອບສາຍຍິງກ່ອນ.

ສະນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ.

ຫົວໜ້າຫ້ອງ ຄຊກລ

ຄຸນເພັງ ສີສະຫວັດ

ໜ່ວຍງານຄຸ້ມຄອງຄຸນນະພາບ

ບ່ອນນຳສົ່ງ:

- ຄຄກລ ແຂວງຄຳມ່ວນ MAG 'ເພື່ອລາຍງານ'
- ອົງການເກັບກູ້ລະເບີດ MAG ນະຄອນຫຼວງວຽງຈັນ ແລະ MAG ປະຈຳແຂວງຄຳມ່ວນ 'ເພື່ອປະຕິບັດ"
- ຫ້ອງການ ຄຊກລ ເກັບມ້ຽນ.



ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫ້ອງການ ຄຊກລ, ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ.ຕູ້ໄປສະນີ: 7261, ໂທ: (856-21) 262398, ແຟັກ : 262398,